**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ອົງການໄອຍະການປະຊາຊົນສູງສຸດ ເລກທີ..05..../ອອປສ.

ນະຄອນຫຼວງວຽງຈັນ, ວັນທີ...7...ກໍລະກົດ 2025.

# ຄໍາສັ່ງ

**ເຖິງ:** ຫົວໜ້າອົງການໄອຍະການປະຊາຊົນທ້ອງຖິ່ນ ແລະ ອົງການໄອຍະການທະຫານ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການດໍາເນີນຄະດີຕໍ່ກັບການກະທໍາຜິດກ່ຽວກັບຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ.

- ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ (ສະບັບປັບປຸງ) ເລກທີ 21/ສພຊ, ລົງວັນທີ 10 ພຶດສະພາ 2017 ມາດຕາ 10, 13 ແລະ 27;
- ອີງຕາມ ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ (ສະບັບປັບປຸງ) ເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017 ມາດຕາ 5;
- ອີງຕາມ ປະມວນກົດໝາຍອາຍາ ສະບັບເລກທີ 013/ສພຊ, ລົງວັນທີ 17 ພຶດສະພາ 2017 ມາດຕາ 326-353.

ໃນໄລຍະຜ່ານມາ ໄດ້ເກີດມີປະກົດການຫຍໍ້ທໍ້ໃນສັງຄົມເຊັ່ນ: ການຕັດໄມ້ຄຸ້ມຄອງ, ຖາງປ່າ, ຈູດປ່າ ແລະ ການຂຸດຄົ້ນເຄື່ອງປ່າຂອງດົງ ໂດຍບໍ່ຖືກຕ້ອງຕາມກົດໝາຍ, ການຕັດ, ຊື້-ຂາຍ ຫຼື ເຄື່ອນຍ້າຍໄມ້ ແລະ ຕໍໄມ້ທໍາມະຊາດ ປະເພດຫວງຫ້າມ ແລະ ໄມ້ພິເສດທີ່ໃກ້ຈະສູນພັນໂດຍບໍ່ຖືກຕ້ອງຕາມກົດໝາຍ, ການທໍາລາຍເຄື່ອງປູກ, ການລ່າເນື້ອໂດຍບໍ່ຖືກຕ້ອງຕາມກົດໝາຍ, ການຫາປາ ຫຼື ສັດນໍ້າອື່ນ ໂດຍບໍ່ຖືກຕ້ອງຕາມກົດໝາຍ, ການບຸກລຸກທໍາລາຍຖິ່ນອາໄສ ແລະ ແຫຼ່ງອາຫານຂອງສັດນໍ້າ ແລະ ສັດປ່າ, ການຄ້າຂາຍ ຫຼື ມີໄວ້ໃນຄອບຄອງສັດນໍ້າ ຫຼື ສັດປ່າທີ່ຫວງຫ້າມ, ການນໍາເຂົ້າ, ສົ່ງອອກ, ນໍາຜ່ານ ຫຼື ເຄື່ອນຍ້າຍສັດນໍ້າ ແລະ ສັດປ່າ, ການທໍາລາຍຊັບພະຍາກອນສັດນໍ້າ, ການລະເມີດລະບຽບການກ່ຽວກັບການຄຸ້ມຄອງສັດປ່າທີ່ມີຄຸນຄ່າ ແລະ ຫາຍາກ, ການທໍລະມານສັດ ແລະ ການກະທໍາຜິດອື່ນ ທີ່ກ່ຽວຂ້ອງກັບຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເກີດຂຶ້ນຢ່າງຫຼວງຫຼາຍ ແຕ່ການດໍາເນີນຄະດີຕາມກົດໝາຍ ແມ່ນມີໜ້ອຍ. ສ່ວນຫຼາຍແມ່ນແກ້ໄຂທາງບໍລິຫານ, ສ່ວນຄະດີແມ່ນບໍ່ດໍາເນີນຕາມກົດໝາຍ ເຮັດໃຫ້ເກີດຜົນກະທົບທາງລົບ ຕໍ່ການບັງຄັບໃຊ້ກົດໝາຍຂອງ ສປປລາວ, ເພື່ອເປັນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ໃນການຫັນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ ພ້ອມທັງເປັນການປະຕິບັດພັນທະສາກົນ ກ່ຽວກັບບັນຫາດັ່ງກ່າວ ແລະ ເພື່ອມີຄວາມເປັນເອກະພາບກັນ ໃນການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ.

## ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຈຶ່ງອອກຄໍາສັ່ງ:

1. ຕໍ່ກັບຜູ້ກະທໍາຜິດກ່ຽວກັບຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຊຶ່ງເປັນການກະທໍາຜິດທີ່ໄດ້ກໍານົດໄວ້ໃນປະມວນກົດໝາຍອາຍາ ສະບັບປີ 2017 ແຕ່ມາດຕາ 326-353 ແລະ ກົດໝາຍອື່ນ ແມ່ນຫ້າມບໍ່ໃຫ້ພະນັກງານໄອຍະການ ສົມທົບກັບເຈົ້າໜ້າທີ່ອົງການສືບສວນ-ສອບສວນ ທຸກພາກສ່ວນ ແກ້ໄຂຄະດີດ້ວຍຮູບການປັບໃໝທາງບໍລິຫານ ແລ້ວທໍາການຊັດມ້ຽນຄະດີ ແລະ ປ່ອຍຕົວຜູ້ກະທໍາຜິດຢ່າງເດັດຂາດ;

2. ຕໍ່ກັບການກະທຳຜິດກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊຶ່ງເປັນການກະທຳຜິດຕາມທີ່ກຳນົດໄວ້ໃນປະມວນກົດໝາຍອາຍາ ແລະ ກົດໝາຍອື່ນ ແມ່ນໃຫ້ພະນັກງານໄອຍະການ ຕິດຕາມກວດກາ ແລະ ສົມທົບກັບເຈົ້າໜ້າທີ່ກ່ຽວຂ້ອງດຳເນີນການສືບສວນ-ສອບສວນ ປະກອບຫຼັກຖານໃນຄະດີຟອກເງິນໄປພ້ອມກັນຕາມກົດໝາຍ.

3. ໃນກໍລະນີມີການລະເມີດ ແມ່ນຈະໄດ້ຮັບຜິດຊອບຕໍ່ໜ້າກົດໝາຍຢ່າງເຂັ້ມງວດ.

ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນສູງສຸດ**

ໄຊຊະນະ ໂຄດພູທອນ

**ບ່ອນສົ່ງ:**

- ຄະນະນຳ ອອປສ 01 ສະບັບ;
- ອົງການໄອຍະການປະຊາຊົນທ້ອງຖິ່ນ ແຂວງລະ 01 ສະບັບ;
- ອົງການໄອຍະການທະຫານ 01 ສະບັບ;
- ບັນດາຫົວໜ້າກົມ, ຫ້ອງການ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ພາກສ່ວນ 01 ສະບັບ;
- ສຳເນົາກົມຕິດຕາມກວດກາການດຳເນີນຄະດີອາຍາ 01 ສະບັບ.